# DDA/DVR

## ແຜນການຈັດໃສ່ວຽກງານເຂັ້ມງວດ

## ສະລູບຄວາມ



*ບຸກຄົນຜູ້ທີ່ມີຄວາມເສັຽອົງຄະທາງມັນສະໝອງຫລືການຈະເຣີນເຕີບໂຕສາ ມາດຈະເຣີນໃນພະລັງແຮງງານນຳໂອກາດສອດຄ່ອງກັນທີ່ຈະໄດ້ຮັບການ ບໍຣິການແລະການອຳນວຍຄວາມສະດວກທີ່ເໝາະສົມຊຶ່ງຖືກເຮັດອອກມາ ໃສ່ຄວາມສະລາດແລະຄວາມຕ້ອງການໂດຍສະເພາະຂອງເຂົາເຈົ້າ.ການບໍຣິການຈັດໃສ່ວຽກງານເຂັ້ມງວດຂອງ* ***DDA/DVR*** *ຊ່ວຍອູ້ມຊູລູກຄ້າຂອງທັງ ສອງຫ້ອງການ* ***Developmental Disabilities Administration*** *ແລະ* ***Division of Vocational Rehabilitation*** *ເພື່ອຈະໄດ້ວຽກງານແທ້ຈິງເຮັດ.*

DVR ຮັບໃຊ້ໃຫ້ເປັນຈຸດເຂົ້າສູ່ການບໍຣິການວຽກງານ,ມຸ່ງໝາຍໃສ່ທາງແກ້ໄຂຣະຍະສັ້ນສຳລັບວຽກງານຕາມຊຸມຊົນຢ່າງເປັນຜົນສຳເຣັດ,ແຂ່ງຂັນການ.DVR ເອົາການບໍຣິການຫລາຍຢ່າງໃຫ້ລວມທັງ,ການຊີ້ນຳແລະການປຶກສາວິຊາຊີບ,ການປະເມີນຜົນ,ການອູ້ມຊູວຽກງານ,ການຝຶກຝົນເຂັ້ມງວດ,ການຮັກສາໄວ້ແລະການບໍຣິການຫລັງຈາກວຽກງານ. DDA ເອົາໃຫ້ເງິນທຶນຣະຍະຍາວສຳລັບລູກຄ້າເພື່ອຈະເຂົ້າຫາການອູ້ມຊູດ້ານວຽກງານຕະລອດໄປຜ່ານຜູ້ບໍຣິການວຽກງານທີ່ມີສັນຍານຳຄາວຕີ.



ຢູ່ໃນບາງກໍຣະນີ,ລູກຄ້າທີ່ມີເງິນທຶນຣະຍະຍາວຂອງ DDA ອາດຈະປະຕິບັດຕາມຫົນທາງເດີນສະເພາະໄປສູ່ວຽກງານຊຶ່ງບໍ່ຊື່ຕົງນຳແບບແຜນຣະຍະສັ້ນ. ຢູ່ໃນກໍຣະນີນີ້,ການໃຊ້ເງິນທຶນຂອງ DDA ເພື່ອຈະຊອກວຽກແລະການປະສານງານຮ່ວມມືນຳຫລັງຈາກວຽກງານຂອງ DVR ແມ່ນຖືກແນະນຳ.ການປະຕິບັດການອັນນີ້ກ່ຽວພັນນຳແຜນການຈັດໃສ່ວຽກງານເຂັ້ມງວດຂອງ DDA/DVR, ອະນຸຍາດໃຫ້ມີການອູ້ມຊູສ່ວນບຸກຄົນໃນຂອບເຂດເວລາທີ່ປ່ຽນແປງໄດ້.

ໃນຂະນະທີ່ແນວທາງການຊອກວຽກງານຂອງ DVR ຈະເໝາະສົມສຳລັບ ລູກຄ້າຫລາຍໆຄົນ,ການພິຈາຣະນາແລະຄວາມເຫັນຈາກຄະນະທີມງານອູ້ມຊູທັງໝົດແມ່ນສຳຄັນເມື່ອເວລາແນະນຳແຜນການຈັດໃສ່ວຽກງານເຂັ້ມງວດຂອງ DDA/DVR.

### ຄຳແຈ້ງການດ້ານການເງິນຂອງ **DVR**

ເງິນທຶນຂອງຣັດແລະຂອງຣັດຖະບານກາງໄດ້ຖືກໃຊ້ເພື່ອຈະເອົາການບໍຣິການ DVR ໃຫ້.ໂຄງການ VR ໄດ້ຮັບປະມານ 78 ເປີເຊັນໃນເງິນທຶນຂອງຣັດຖະບານກາງແລະ 22 ເປີເຊັນໃນເງິນທຶນຂອງຣັດ.ເພື່ອຣາຍລະອຽດຄົບຖ້ວນກ່ຽວກັບຈຳນວນເງິນຂອງຣັດຖະບານກາງສຳລັບໂຄງການ,ກະຣຸນາແວ່ຢ້ຽມ:
https://rsa.ed.gov/fiscal/grant-awards

Washington State Department of Social and Health Services
Division of Vocational Rehabilitation
PO Box 45340 • Olympia, WA 98504-5340 • 1-800-637-5627
www.dshs.wa.gov/dvr • DVRCSR@dshs.wa.gov

Washington State Department of Social & Health Services
*Transforming lives*

DSHS 22-1975 Laotian

# ແມ່ນໃຜສາມາດຊ່ວຍຂ້ອຍໄດ້ ນຳວຽກງານ.

*ຜູ້ບໍລິການວຽກງານຂອງທ່ານຈະອູ້ມຊູທ່ານຜ່ານຜ່າທຸກໆ ຂັ້ນຕອນຂອງການດຳເນີນການ.ເຂົາເຈົ້າຖືກອອກເງິນ ທຶນໃຫ້ໂດຍແຫລ່ງທີ່ມາແຕກຕ່າງກັນໃນເວລາ ແຕກຕ່າງກັນ,ໂດຍຂຶ້ນນຳວ່າທ່ານຢູ່ໃສ ໃນ ການຊອກຫາວຽກງານຂອງທ່ານ.*

## ແນວທາງອັນໃດທີ່ຖືກຕ້ອງ ສຳລັບຂ້ອຍ?

*ທ່ານຈະພົບເຫັນສະມາຊິກທີມງານຂອງ ທ່ານທຸກໆຄົນຕະລອດວິຊາຊີບຂອງທ່ານ ໄປຕະລອດໃນຈຸດຕ່າງໆຂອງເວລາ.*

### DVR

**Division of Vocational Rehabilitation**

ເອົາການອູ້ມຊູຣະຍະສັ້ນໃຫ້ເພື່ອຈະຊ່ວຍທ່ານໃຫ້ທົດ ລອງວຽກງານ,ຊອກຫາວຽກງານແລະຮຽນຮູ້ວຽກ ໃຫມ່ຂອງທ່ານ.ເຂົາເຈົ້າຍັງເອົາການປຶກ ສາວຽກງານໃຫ້ ອີກຄືກັນ,ເງິນສຳລັບເຄື່ອງ ແບບ,ການອຳນວຍຄວາມສະ ດວກ,ການ ບໍຣິການດຳຣົງຊີວິດບໍ່ຂຶ້ນນຳໃຜແລະການ ອູ້ມຊູອື່ນໆເພື່ອຈະຊ່ວຍທ່ານໃຫ້ສຳເຣັດ.

- ເມື່ອເວລາທ່ານຕ້ອງການທີ່ຈະຄົ້ນ ຄວ້າຫາວຽກງານ ຊະນິດແຕກຕ່າງກັນຢູ່ໃນຊຸມຊົນ.
- ເມື່ອເວລາທ່ານຕ້ອງການທີ່ຈະຊອກຫາວຽກໃຫມ່.
- ເມື່ອເວລາທ່ານກຳລັງຝຶກແອບຢູ່ວຽກງານໃຫມ່ຂອງທ່ານ.
- ເມື່ອເວລາທ່ານຕ້ອງການອູ້ມຊູຣະຍະສັ້ນຢູ່ວຽກງານຂອງທ່ານ.
- ເມື່ອເວລາທ່ານຕ້ອງການການອຳນວຍຄວາມສະດວກໃນ ວຽກງານ.

### ການບໍຣິການຂອງຄາວຕີແລະ DDA

ະນະທີມງານ **DD** ຂອງຄາວຕີຂອງທ່ານຄວບຄຸມນຳ ການບໍຣິການທີ່ຖືກສະເນີໃຫ້ໂດຍຜູ້ບໍຣິການວຽກງານຂອງ ທ່ານ,ຮັບປະກັນວ່າການບໍຣິການທີ່ມີຄຸນນະພາບສູງໄດ້ຖືກເ ອົາໃຫ້ແລະຊ່ວຍເຫລືອຖືກຖຽງກັນແລະການແກ້ໄຂບັນຫາ ຕາມທີ່ຕ້ອງການ.ເຂົາເຈົ້າຍັງສາມາດອະນຸຍາດການຊ່ວຍື ເຫລອທາງວິຊາການສ່ວນບຸກຄົນຖ້າຫາກວ່າການອູ້ມຊູເພີ້ມ ເຕີມຈາກຜູ້ປຶກສາຈະຊ່ວຍຄວາມສຳເຣັດໃນວຽກງານ ຂອງທ່ານ.

- ເມື່ອເວລາທ່ານຕ້ອງການທີ່ຈະກໍ່ສ້າງ ແລະທົດລອງຄວາມຊຳ ນານໃນວຽກ ງານກ່ອນການຊອກຫາວຽກງານ.
- ເມື່ອເວລາທ່ານຕ້ອງການການອູ້ມຊູ ທີ່ດຳເນີນຕໍ່ໄປເພື່ອຈະຮັກ ສາຄວາມສຳເຣັດໃນວຽກງານຂອງທ່ານ.
- ເມື່ອເວລາທ່ານກຳລັງຊອກຫາເພື່ອຈະກ້າວຫນ້າອາຊີບຂອງທ່ານ.
- ເມື່ອເວລາທ່ານຕ້ອງການທີ່ຈະເຣັດ ວຽກນຳຜູ້ປຶກສາເພື່ອຈະ ໄດ້ຮັບການອູ້ມຊູເພີ້ມເຕີມ.

### ແຜນການຈັດໃສ່ວຽກງານ ເຂັ້ມງວດຂອງ DDA/DVR

**Developmental Disabilities Administration** ເອົາເງິນທຶນຣະຍະ ຍາວໃຫ້ເພື່ອວ່າຜູ້ບໍຣິການວຽກງານຂອງ ທ່ານຈະອູ້ມຊູ ທ່ານໃຫ້ຢູ່ຢ່າງເປັນຜົນສຳ ເຣັດໃນວຽກງານແລະ ກ້າວຫນ້າໃນວິຊາຊີບຂອງທ່ານ.

- ເມື່ອເວລາທ່ານຕ້ອງການທີ່ຈະເຣັດວຽກນຳ DVR ແລະ DDA/ ພະແນກບໍຣິການຂອງຄາວຕີ.
- ເມື່ອເວລາທ່ານຕ້ອງການເວລາເພີ້ມເຕີມຈັກຫນ້ອຍເພື່ອຈະ ພັດທະນາຄວາມຊຳນານເພື່ອຈະໃຊ້ຢູ່ວຽກງານ.
- ເມື່ອເວລາທ່ານຕ້ອງການເວລາເພີ້ມ ເຕີມເພື່ອຈະຊອກຫາ ວຽກທີ່ເຫມາະສົມ.
- ເມື່ອເວລາທ່ານຕ້ອງການເວລາດົນກວ່າເພື່ອຈະຄົ້ນຄວ້າ ທາງເລືອກໃນ ວິຊາຊີບຂອງທ່ານ.

Washington State
Department of Social & Health Services
*Transforming lives*